ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ | ເລກທີ 246 /ລບ

ນະຄອນຫຼວງວຽງຈັນ, ວັນທີ 03.08.2023

# ດຳລັດ
# ວ່າດ້ວຍທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0427/ພບ, ລົງວັນທີ 09 ມີນາ 2023.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ເພື່ອໃຫ້ການນຳໃຊ້ທຶນດັ່ງກ່າວດຳເນີນໄປຢ່າງໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມເປົ້າໝາຍ, ສອດຄ່ອງກັບການພັດທະນາ ແລະ ຄວາມເປັນຈິງຂອງທ້ອງຖິ່ນ ແນໃສ່ພັດທະນາໂຄງລ່າງພື້ນຖານ ແລະ ຄຸນນະພາບຊີວິດຂອງປະຊາຊົນ ໃນເຂດທີ່ໂຄງການຕັ້ງຢູ່ ຫຼື ເຂດໃກ້ຄຽງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

### ມາດຕາ 2 ທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ

ທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ແມ່ນທຶນທີ່ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ປະກອບສ່ວນໃຫ້ອົງການປົກຄອງທ້ອງຖິ່ນ ບ່ອນໂຄງການຕັ້ງຢູ່ ເພື່ອນຳໃຊ້ເຂົ້າໃນກິດຈະກຳພັດທະນາໂຄງລ່າງພື້ນຖານ ແລະ ຄຸນນະພາບຊີວິດຂອງປະຊາຊົນ.

### ມາດຕາ 3 ຫຼັກການໃນການຄຸ້ມຄອງ ແລະ ນຳໃຊ້

ການຄຸ້ມຄອງ ແລະ ນຳໃຊ້ ທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. ຖືກຕ້ອງ, ສອດຄ່ອງຕາມເປົ້າໝາຍ ແລະ ແຜນການນຳໃຊ້;
3. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ເປີດເຜີຍ, ໂປ່ງໃສ ແລະ ສາມາດກວດສອບໄດ້.

## ໝວດທີ 2
## ແຫຼ່ງ ແລະ ຮູບແບບ ທຶນ

**ມາດຕາ 4** ແຫຼ່ງທຶນ

ທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ແມ່ນທຶນທີ່ໄດ້ມາຈາກການປະກອບສ່ວນຂອງບັນດາບໍລິສັດທີ່ດຳເນີນທຸລະກິດກ່ຽວກັບແຮ່ທາດ.

**ມາດຕາ 5 ທຶນພັດທະນາຊຸມຊົນຂັ້ນແຂວງ**

ທຶນພັດທະນາຊຸມຊົນຂັ້ນແຂວງ ຂຽນຫຍໍ້ວ່າ "ທພຊຂ" ແມ່ນທຶນທີ່ນຳໃຊ້ເຂົ້າໃນການພັດທະນາແຂວງ, ນະຄອນຫຼວງ ທີ່ໂຄງການຕັ້ງຢູ່.

**ມາດຕາ 6 ທຶນພັດທະນາຊຸມຊົນຂັ້ນເມືອງ**

ທຶນພັດທະນາຊຸມຊົນຂັ້ນເມືອງ ຂຽນຫຍໍ້ວ່າ "ທພຊມ" ແມ່ນທຶນທີ່ນຳໃຊ້ເຂົ້າໃນການພັດທະນາເມືອງ, ເທດສະບານ, ນະຄອນ ທີ່ໂຄງການຕັ້ງຢູ່.

**ມາດຕາ 7 ຮູບແບບທຶນ**

ທຶນພັດທະນາຊຸມຊົນແຕ່ລະປະເພດ ມີ ສອງ ຮູບແບບຄື:

ທຶນພັດທະນາຊຸມຊົນຮູບແບບດ່ຽວ ແມ່ນທຶນທີ່ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ປະກອບສ່ວນທຶນພັດທະນາຊຸມຊົນເປັນຈຳນວນເງິນ ໜຶ່ງແສນຫ້າສິບພັນ (150.000) ໂດລາສະຫະລັດ ຂຶ້ນໄປ ຕໍ່ປີ ຊຶ່ງຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ມີເຈດຈຳນົງເປັນຜູ້ດຳເນີນໂຄງການ ແລະ ກິດຈະກຳພັດທະຊຸມຊົນ ດ້ວຍຕົນເອງ.

ທຶນພັດທະນາຊຸມຊົນຮູບແບບລວມ ແມ່ນທຶນພັດທະນາຊຸມຊົນ ທີ່ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດໃດໜຶ່ງ ປະກອບສ່ວນທຶນພັດທະນາຊຸມຊົນເປັນຈຳນວນເງິນ ຕ່ຳກວ່າ ໜຶ່ງແສນຫ້າສິບພັນ (150.000) ໂດລາສະຫະລັດ ຕໍ່ປີ ຫຼື ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ປະກອບສ່ວນທຶນພັດທະນາຊຸມຊົນເປັນຈຳນວນເງິນ ໜຶ່ງແສນຫ້າສິບພັນ (150.000) ໂດລາສະຫະລັດ ຂຶ້ນໄປ ຕໍ່ປີ ແຕ່ບໍ່ມີເຈດຈຳນົງເປັນຜູ້ດຳເນີນໂຄງການ ແລະ ກິດຈະກຳພັດທະຊຸມຊົນ ດ້ວຍຕົນເອງ.

## ໝວດທີ 3
## ເປົ້າໝາຍການນຳໃຊ້ທຶນພັດທະນາຊຸມຊົນ

**ມາດຕາ 8 ເປົ້າໝາຍການນຳໃຊ້ທຶນພັດທະນາຊຸມຊົນ**

ທຶນພັດທະນາຊຸມຊົນ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການສ້າງ ແລະ ບຳລຸງຮັກສາບັນດາໂຄງລ່າງພື້ນຖານຂອງຊຸມຊົນ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ເສັ້ນທາງ, ຂົວ, ລະບົບໄຟຟ້າ, ລະບົບສື່ສານ, ລະບົບນ້ຳໃຊ້, ລະບົບຊົນລະປະທານ, ຮ່ອງລະບາຍນ້ຳເປື້ອນ, ການບໍລິການສຸຂະພິບານ, ສະຖານທີ່ຖິ້ມຂີ້ເຫຍື້ອ;
2. ການສະໜັບສະໜູນການທຳການຜະລິດ;
3. ການສະໜັບສະໜູນການສຶກສາ ແລະ ການຝຶກອົບຮົມ;
4. ການໄປຖອດຖອນບົດຮຽນ ແລະ ທັດສະນະສຶກສາ;

5. ວຽກຄຸ້ມຄອງບໍລິຫານ ທຶນພັດທະນາຊຸມຊົນ ບໍ່ເກີນ ສິບສ່ວນຮ້ອຍ ຂອງທຶນພັດທະນາຊຸມຊົນ.

**ມາດຕາ 9 ການຂຶ້ນແຜນການນຳໃຊ້ທຶນພັດທະນາຊຸມຊົນ**

ການຂຶ້ນແຜນການນຳໃຊ້ທຶນພັດນາຊຸມຊົນ ຖືກແບ່ງອອກເປັນ ສອງ ຂັ້ນ ໂດຍແຍກຕາມຂັ້ນຂອງທຶນພັດທະນາຊຸມຊົນ ຄື ການຂຶ້ນແຜນການນຳໃຊ້ທຶນພັດທະນາຊຸມຊົນຂັ້ນແຂວງ ແລະ ການຂຶ້ນແຜນການນຳໃຊ້ທຶນພັດທະນາຊຸມຊົນຂັ້ນເມືອງ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ຂຶ້ນແຜນການນຳໃຊ້ທຶນພັດທະນາຊຸມຊົນ ໂດຍມີການທາບທາມຄຳເຫັນຈາກອົງການປົກຄອງຂັ້ນເມືອງ ແລະ ປະຊາຊົນ ທີ່ເປັນກຸ່ມເປົ້າໝາຍ ກ່ອນສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຮັບຮອງ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ຂຶ້ນແຜນການນຳໃຊ້ທຶນພັດທະນາຊຸມຊົນ ໂດຍມີການທາບທາມຄຳເຫັນຈາກອົງການປົກຄອງຂັ້ນບ້ານ ແລະ ປະຊາຊົນ ທີ່ເປັນກຸ່ມເປົ້າໝາຍ ກ່ອນສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຮັບຮອງ.

**ມາດຕາ 10 ການຖອນເງິນ**

ການຖອນເງິນຈາກບັນຊີເງິນຝາກ ຕ້ອງປະຕິບັດຕາມ ແຜນການ, ແຜນງານ, ໂຄງການທີ່ຖືກຮັບຮອງໂດຍຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ແລະ ລະບຽບການ ຂອງກະຊວງການເງິນ. ການຖອນເງິນແຕ່ລະຄັ້ງ ຕ້ອງມີສອງລາຍເຊັນຂອງຜູ້ທີ່ໄດ້ຮັບມອບສິດ ຈາກຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ.

## ໝວດທີ 4
## ການຄຸ້ມຄອງບໍລິຫານທຶນ

**ມາດຕາ 11 ທີ່ຕັ້ງຂອງທຶນ**

ທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ໃນແຕ່ລະຂັ້ນມີທີ່ຕັ້ງ ດັ່ງນີ້:

1. ທຶນພັດທະນາຊຸມຊົນຂັ້ນແຂວງ ຕັ້ງຢູ່ພະແນກພະລັງງານ ແລະ ບໍ່ແຮ່ ຂັ້ນແຂວງ;
2. ທຶນພັດທະນາຊຸມຊົນຂັ້ນເມືອງ ຕັ້ງຢູ່ຫ້ອງການພະລັງງານ ແລະ ບໍ່ແຮ່ ຂັ້ນເມືອງ.

ທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ແຕ່ລະຂັ້ນມີຄະນະກຳມະການຄຸ້ມຄອງບໍລິຫານ ແລະ ກອງເລຂາຂອງຕົນ.

**ມາດຕາ 12 ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ແມ່ນການຈັດຕັ້ງສູງສຸດຂອງທຶນພັດທະນາຊຸມຊົນຂັ້ນແຂວງ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ເປັນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ, ຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ຂັ້ນແຂວງ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ມີອາຍຸການ ຫ້າ ປີ.

**ມາດຕາ 13 ໂຄງປະກອບບຸກຄະລາກອນຂອງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ປະກອບດ້ວຍ:

1. ຮອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນປະທານ;

2. ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ຂັ້ນແຂວງ ເປັນຮອງປະທານ ທັງເປັນຫົວໜ້າກອງເລຂາ;
3. ຫົວໜ້າພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ ເປັນກໍາມະການ;
4. ຫົວໜ້າພະແນກການເງິນ ຂັ້ນແຂວງ ເປັນກໍາມະການ;
5. ຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເປັນກໍາມະການ;
6. ເຈົ້າເມືອງຂອງເມືອງທີ່ໂຄງການຕັ້ງຢູ່ ເປັນກໍາມະການ;
7. ຜູ້ຕາງໜ້າ ບໍລິສັດ ດໍາເນີນທຸລະກິດກ່ຽວກັບແຮ່ທາດທີ່ປະກອບສ່ວນ ເປັນກໍາມະການ.

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອາດຈະແຕ່ງຕັ້ງຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ເພີ່ມຕື່ມ ຕາມແຕ່ລະກໍລະນີ.

## ມາດຕາ 14 ສິດ ແລະ ໜ້າທີ່ ຂອງຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ

ຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງບໍລິຫານທຶນເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຂໍ້ຕົກລົງຂອງ ແຂວງ, ນະຄອນຫຼວງ, ລະບຽບການຂອງທຶນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ຮັບຮອງ ແຜນການ, ແຜນງານ, ໂຄງການ ແລະ ແຜນງົບປະມານການເຄື່ອນໄຫວປະຈໍາ ຫົກ ເດືອນ ແລະ ປະຈໍາປີ ສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາ;
3. ພິຈາລະນາແຜນການຂອງໂຄງການທີ່ສະເໜີຂໍນໍາໃຊ້ທຶນເພື່ອນໍາເຂົ້າແຜນການ ແລະ ແຜນງົບປະມານການເຄື່ອນໄຫວປະຈໍາປີຂອງທຶນກ່ອນສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
4. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງບຸກຄະລາກອນຂອງກອງເລຂາ ຄະນະກໍາມະການຄຸ້ມຄອງບໍລິຫານທຶນ;
5. ຕິດຕາມ, ກວດກາ, ຄຸ້ມຄອງ ການເຄື່ອນໄຫວ ແລະ ການນໍາໃຊ້ທຶນ ໃຫ້ສອດຄ່ອງກັບເປົ້າໝາຍນໍາໃຊ້, ແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
6. ພິຈາລະນາຜົນການປະເມີນປະຈໍາປີກ່ຽວກັບການຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກໍາພັດທະນາຊຸມຊົນ ທີ່ນໍາໃຊ້ທຶນ ແລ້ວສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
7. ຮັບຮອງບົດລາຍງານຜົນການກວດສອບທາງດ້ານການເງິນ ຂອງທຶນ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
9. ສະຫຼຸບ, ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງທຶນ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງຂັ້ນແຂວງ ປະຈໍາ ຫົກ ເດືອນ ແລະ ໜຶ່ງ ປີ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 15 ກອງປະຊຸມຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ

ກອງປະຊຸມຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ປະກອບມີ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນເປີດຂຶ້ນ ສອງ ຄັ້ງຕໍ່ປີ ໃນກໍລະນີ ມີບັນຫາສໍາຄັນ ທີ່ຕ້ອງໄດ້ ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຕາມການຮຽກປະຊຸມ ຂອງປະທານຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ຊຶ່ງມີສະມາຊິກ ເຂົ້າຮ່ວມແຕ່ ສອງສ່ວນສາມຂຶ້ນໄປ. ມະຕິຂອງກອງປະຊຸມ ຈະມີຜົນບັງຄັບໃຊ້ ກໍຕໍ່ເມື່ອໄດ້ຮັບການຮັບຮອງຈາກສຽງສ່ວນຫຼາຍ ຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

ໃນກໍລະນີ ປະທານຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ ຮອງປະທານຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ຜູ້ທີ່ຖືກມອບໝາຍ ເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 16 ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ**

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າ ໜຶ່ງ ຫາ ສອງ ຄົນ ແລະ ພະນັກງານຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍ ປະທານຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ຕາມການສະເໜີຂອງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ.

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ມີອາຍຸການ ຫ້າ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ**

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຂຶ້ນແຜນການ, ແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວວຽກງານທຶນ ປະຈຳ ທຶກ ເດືອນ ແລະ ປະຈຳປີ ສະເໜີຕໍ່ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ຂັ້ນແຂວງ ພິຈາລະນາ ຮັບຮອງ;
2. ຄຸ້ມຄອງບັນຊີເງິນຝາກຂອງທຶນ;
3. ເບີກຈ່າຍເງິນເພື່ອສະໜອງໃຫ້ກິດຈະກຳຕ່າງໆ ຕາມແຜນການທີ່ຄະນະກຳມະການຄຸ້ມຄອງ ບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງຮັບຮອງ;
4. ຕິດຕາມ ກວດກາ ແລະ ປະເມີນຜົນການນຳໃຊ້ທຶນ ທີ່ໄດ້ຮັບການອະນຸມັດ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
6. ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານທຶນ ຕໍ່ຄະນະກຳມະການຄຸ້ມຄອງບໍລິຫານທຶນ ພັດທະນາຊຸມຊົນຂັ້ນແຂວງຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 18 ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ແມ່ນ ການຈັດຕັ້ງສູງສຸດຂອງທຶນ ພັດທະນາຊຸມຊົນຂັ້ນເມືອງ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ເປັນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ, ຖືກແຕ່ງຕັ້ງໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງຫົວໜ້າຫ້ອງການ ພະລັງງານ ແລະ ບໍ່ແຮ່ ຂັ້ນເມືອງ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ມີອາຍຸການ ຫ້າ ປີ.

**ມາດຕາ 19 ໂຄງປະກອບບຸກຄະລາກອນຂອງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ປະກອບດ້ວຍ:

1. ຮອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນປະທານ;
2. ຫົວໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ຂັ້ນເມືອງ ເປັນຮອງປະທານ ທັງເປັນຫົວໜ້າກອງເລຂາ;
3. ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ຂັ້ນເມືອງ ເປັນກຳມະການ;
4. ຫົວໜ້າຫ້ອງການການເງິນ ຂັ້ນເມືອງ ເປັນກຳມະການ;
5. ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນກຳມະການ;
6. ຜູ້ຕາງໜ້າ ບໍລິສັດ ດຳເນີນທຸລະກິດກ່ຽວກັບແຮ່ທາດທີ່ປະກອບສ່ວນທຶນ ເປັນກຳມະການ;
7. ນາຍບ້ານທີ່ກ່ຽວຂ້ອງ ເປັນກຳມະການ.

ເຈົ້າເມືອງ, ຫົວໜ້າເທດສະບານ,ເຈົ້ານະຄອນ ອາດຈະແຕ່ງຕັ້ງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ເຂົ້າຕື່ມ ຕາມແຕ່ລະກໍລະນີ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງບໍລິຫານທຶນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ຂໍ້ຕົກລົງຂອງ ເມືອງ, ເທດສະບານ, ນະຄອນ, ລະບຽບການຂອງທຶນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ຮັບຮອງ ແຜນການ, ແຜນງານ, ໂຄງການ ແລະ ແຜນງົບປະມານການເຄື່ອນໄຫວປະຈຳ ທຶກ ເດືອນ ແລະ ປະຈຳປີ ສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາ;
3. ພິຈາລະນາແຜນການຂອງໂຄງການທີ່ສະເໜີຂໍນຳໃຊ້ທຶນ ເພື່ອນຳເຂົ້າແຜນການ ແລະ ແຜນງົບປະມານການເຄື່ອນໄຫວປະຈຳປີຂອງທຶນ ກ່ອນສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນຂອງກອງເລຂາ ຄະນະກຳມະການຄຸ້ມຄອງບໍລິຫານທຶນ;
5. ຕິດຕາມ, ກວດກາ, ຄຸ້ມຄອງ ການເຄື່ອນໄຫວ ແລະ ການນຳໃຊ້ທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້, ແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
6. ພິຈາລະນາຜົນການປະເມີນປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳພັດທະນາຊຸມຊົນ ທີ່ນຳໃຊ້ທຶນ ແລ້ວສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
7. ຮັບຮອງບົດລາຍງານຜົນການກວດສອບທາງດ້ານການເງິນ ຂອງທຶນ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
9. ສະຫຼຸບ, ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງທຶນ ໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງຂັ້ນເມືອງ ປະຈຳ ທຶກ ເດືອນ ແລະ ໜຶ່ງ ປີ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ກອງປະຊຸມຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ**

ກອງປະຊຸມຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງປະກອບມີ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນເປີດຂຶ້ນ ສອງຄັ້ງຕໍ່ປີ ໃນກໍລະນີ ມີບັນຫາສຳຄັນ ທີ່ຕ້ອງໄດ້ ປຶກສາຫາລື ແລະ ພິຈາລະນາຕົກລົງ ຢ່າງເລັ່ງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຕາມການຮຽກປະຊຸມ ຂອງປະທານຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ຊຶ່ງມີສະມາຊິກ ເຂົ້າຮ່ວມແຕ່ ສອງສ່ວນສາມຂຶ້ນໄປ. ມະຕິຂອງກອງປະຊຸມ ຈະມີຜົນບັງຄັບໃຊ້ ກໍຕໍ່ເມື່ອໄດ້ຮັບການຮັບຮອງຈາກສຽງສ່ວນຫຼາຍ ຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

ໃນກໍລະນີ ປະທານຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ ຮອງປະທານຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ຜູ້ທີ່ຖືກມອບໝາຍ ເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 22 ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ**

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າ ໜຶ່ງ ຫາ ສອງ ຄົນ ແລະ ພະນັກງານຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງຕາມການສະເໜີຂອງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ.

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ມີອາຍຸການ ຫ້າ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ**

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຂຶ້ນແຜນການ, ແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວວຽກງານທຶນ ປະຈຳ ທີກ ເດືອນ ແລະ ປະຈຳປີ ສະເໜີຕໍ່ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ຂັ້ນເມືອງ ພິຈາລະນາ ຮັບຮອງ;
2. ຄຸ້ມຄອງບັນຊີເງິນຝາກຂອງທຶນ;
3. ເບີກຈ່າຍເງິນເພື່ອສະໜອງໃຫ້ກິດຈະກຳຕ່າງໆ ຕາມແຜນການ ທີ່ຄະນະກຳມະການຄຸ້ມຄອງບໍລິຫານ ທຶນພັດທະນາຊຸມຊົນຂັ້ນເມືອງ ຮັບຮອງ;
4. ຕິດຕາມ ກວດກາ ແລະ ປະເມີນຜົນການນຳໃຊ້ທຶນ ທີ່ໄດ້ຮັບການອະນຸມັດ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
6. ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານທຶນ ຕໍ່ຄະນະກຳມະການຄຸ້ມຄອງບໍລິຫານ ທຶນພັດທະນາຊຸມຊົນຂັ້ນເມືອງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 5
## ການບັນຊີ, ການກວດສອບ ແລະ ການລາຍງານ

**ມາດຕາ 24 ການເປີດບັນຊີ**

ທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ ຕ້ອງມີລະບົບບັນຊີທີ່ຖືກຕ້ອງຕາມ ກົດໝາຍວ່າດ້ວຍການບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ຕາມການອະນຸມັດຂອງຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ບົນພື້ນຖານການເຫັນດີ ຂອງຂະແໜງການການເງິນ.

ສຳລັບການເປີດບັນຊີຂອງທຶນພັດທະນາຊຸມຊົນຮູບແບບດ່ຽວ ຕ້ອງເປີດບັນຊີເງິນຝາກ ຮ່ວມກັບຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ຢູ່ທະນາຄານທຸລະກິດ ຢູ່ ສປປ ລາວ.

ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ຕ້ອງໂອນເຂົ້າບັນຊີເງິນຝາກ ກ່ອນວັນທີ 15 ມັງກອນ ຂອງທຸກໆປີ, ສຳລັບໄລຍະການປະກອບສ່ວນທຶນພັດທະນາຊຸມຊົນ ແມ່ນປະຕິບັດຕາມອາຍຸຂອງໂຄງການ.

ທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ຕ້ອງໂອນເງິນດັ່ງນີ້:

1. ທຶນພັດທະນາຊຸມຊົນຂັ້ນແຂວງ ຕ້ອງໂອນເງິນເຂົ້າບັນຊີເງິນຝາກ ໃນແຂວງ, ນະຄອນຫຼວງ ທີ່ໂຄງການຕັ້ງຢູ່;
2. ທຶນພັດທະນາຊຸມຊົນຂັ້ນເມືອງ ຕ້ອງໂອນເງິນເຂົ້າບັນຊີເງິນຝາກ ໃນເມືອງ, ເທດສະບານ, ນະຄອນ ທີ່ໂຄງການຕັ້ງຢູ່. ໃນກໍລະນີ ເມືອງ, ເທດສະບານ, ນະຄອນ ບໍ່ມີທະນາຄານຕັ້ງຢູ່ ກໍສາມາດເປີດບັນຊີຢູ່ທະນາຄານ ຢູ່ເມືອງ, ເທດສະບານ, ນະຄອນ ໃກ້ຄຽງ.

**ມາດຕາ 25 ການກວດສອບ**

ທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ ມີການກວດສອບທຸກປີ ໂດຍ ອົງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະລະ. ຜົນການກວດສອບຕ້ອງລາຍງານໃຫ້ປະທານຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ແລະ ຖືກພິມເຜີຍແຜ່ໃຫ້ສາທາລະນະຊົນຮັບຮູ້ ຕາມການອະນຸມັດຈາກຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ.

ໃນກໍລະນີທີ່ພົບເຫັນວ່າມີການກະທຳຜິດ, ຜູ້ທີ່ກະທຳຜິດ ຕ້ອງຮັບຜິດຊອບຕາມກົດໝາຍ.

ມາດຕາ 26 ການລາຍງານ

ກອງເລຂາຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ຕ້ອງສົ່ງບົດລາຍງານການຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳທີ່ນຳໃຊ້ທຶນພັດທະນາຊຸມຊົນ ໃຫ້ແກ່ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ຢ່າງເປັນປົກກະຕິ.

ຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນແຂວງ ຕ້ອງສົ່ງບົດລາຍງານ ໃຫ້ແກ່ກະຊວງພະລັງງານ ແລະ ບໍ່ແຮ່ແລະ ອົງການປົກຄອງຂັ້ນແຂວງ, ສ່ວນຄະນະກຳມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນຂັ້ນເມືອງ ຕ້ອງສົ່ງບົດລາຍງານໃຫ້ພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ.

ມາດຕາ 27 ການເຜີຍແຜ່

ທຶນພັດທະນາຊຸມຊົນ ຕ້ອງໄດ້ຮັບການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບບົດລາຍງານການເງິນ, ຜົນງານ ແລະ ການເຄື່ອນໄຫວຂອງຕົນ ໃຫ້ສາທາລະນະຊົນໄດ້ຮັບຮູ້ ໂດຍສະເພາະລາຍຊື່ໂຄງການ ແລະ ກິດຈະກຳພັດທະນາຊຸມຊົນ ພາຍໃນຂັ້ນຂອງຕົນ ທີ່ໄດ້ຮັບເງິນຈາກທຶນພັດທະນາຊຸມຊົນ.

## ໝວດທີ 6
## ຄວາມຮັບຜິດຊອບຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ກ່ຽວກັບການນຳໃຊ້ທຶນ

ມາດຕາ 28 ຄວາມຮັບຜິດຊອບຂອງກະຊວງພະລັງງານ ແລະ ບໍ່ແຮ່

ກະຊວງພະລັງງານ ແລະ ບໍ່ແຮ່ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງ ນະໂຍບາຍ, ລະບຽບການ ກ່ຽວກັບທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ;
2. ໂຄສະນາເຜີຍແຜ່ລະບຽບການກ່ຽວກັບທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ;
3. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ໃນຂອບເຂດທົ່ວປະເທດ;
4. ເປັນເຈົ້າການ ໃນການເຈລະຈາທຶນກັບບັນດາບໍລິສັດທີ່ດຳເນີນທຸລະກິດກ່ຽວກັບແຮ່ທາດ;
5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີກ່ຽວກັບທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ ໃຫ້ລັດຖະບານ ຢ່າງເປັນ ປົກກະຕິ;
8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 29 ຄວາມຮັບຜິດຊອບຂອງພະແນກພະລັງງານ ແລະ ບໍ່ແຮ່ ຂັ້ນແຂວງ

ພະແນກພະລັງງານ ແລະ ບໍ່ແຮ່ຂັ້ນແຂວງ ມີຄວາມຮັບຜິດຊອບ ຕາມພາລະບົດບາດຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ ກ່ຽວກັບທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ;
2. ໂຄສະນາເຜີຍແຜ່ລະບຽບການກ່ຽວກັບທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ;
3. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດພາຍໃນແຂວງ, ນະຄອນຫຼວງ;
4. ເປັນເຈົ້າການ ໃນການເຈລະຈາທຶນກັບບັນດາບໍລິສັດທີ່ດຳເນີນທຸລະກິດກ່ຽວກັບແຮ່ທາດ;
5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີກ່ຽວກັບທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ຢ່າງເປັນປົກກະຕິ;
8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 30 ຄວາມຮັບຜິດຊອບຂອງຫ້ອງການພະລັງງານ ແລະ ບໍ່ແຮ່ ຂັ້ນເມືອງ**

ຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ ກ່ຽວກັບທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດ;
2. ເຜີຍແຜ່ລະບຽບການກ່ຽວກັບທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ;
3. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດທຶນພັດທະນາຊຸມຊົນໃນທຸລະກິດກ່ຽວກັບແຮ່ທາດພາຍໃນເມືອງ, ເທດສະບານ, ນະຄອນ;
4. ເປັນເຈົ້າການ ໃນການເຈລະຈາທຶນກັບບັນດາບໍລິສັດທີ່ດໍາເນີນທຸລະກິດກ່ຽວກັບແຮ່ທາດ;
5. ຮັບ ແລະ ພິຈາລະນາແກ້ໄຂ ຄໍາສະເໜີກ່ຽວກັບທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທຶນພັດທະນາຊຸມຊົນ ໃນທຸລະກິດກ່ຽວກັບແຮ່ທາດ ໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ຢ່າງເປັນປົກກະຕິ;
8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 31 ການຈັດຕັ້ງປະຕິບັດ**

ກະຊວງພະລັງງານ ແລະ ບໍ່ແຮ່, ອົງການປົກຄອງທ້ອງຖິ່ນ ແລະ ຄະນະກໍາມະການຄຸ້ມຄອງບໍລິຫານທຶນພັດທະນາຊຸມຊົນ ເປັນເຈົ້າການຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 32 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ຕຸລາ 2023 ເປັນຕົ້ນໄປ.

ຕາງໜ້າລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ